# San Diego Unified School District
## Fact Sheet

# ມີຫລາຍຢ່າງທີ່ຫົວໜ້າໝວດໂຮງຮຽນສາມາດຢຸດຢັ້ງຄວາມຮຸນແຮງຢູ່ໃນໂຮງຮຽນ

ສະພາປ້ອງກັນການກະທຳຜິດກົດໝາຍແຫ່ງຊາດຂໍໃຫ້ຊ່ອຍຢຸດຢັ້ງຄວາມຮຸນແຮງຢູ່ໃນໂຮງຮຽນ ໃນບັນຊີຄວາມຄິດຕ່າງໆນີ້. ບາງຢ່າງຕ້ອງໄດ້ກະທຳສ່ວນບຸກຄົນ; ບາງຢ່າງຕ້ອງໄດ້ປະຕິບັດຮ່ວມກັນ. ບາງຢ່າງເປັນເຣື່ອງຮີບດ່ວນກ່ອນໝູ່. ບັນຫາອື່ນໆທີ່ກໍ່ໃຫ້ເກີດຄວາມຮຸນແຮງ. ຈົ່ງພິຈາຣະນາເບິ່ງໃນບັນຊີນີ້ – ຍັງມີຫລາຍໆຢ່າງທີ່ສາມາດຊ່ວຍເຫື່ອໄດ້.

1. ໃຫ້ຣາງວັນຕໍ່ການປະພຶດດີ. ຮັບຮູ້ນັກຮຽນທີ່ເຮັດຄວາມດີ, ຈະເປັນການຕົກລົງກັນໂດຍຫລີກເວັ້ນຄວາມຮຸນແຮງ ຫລື ການຊ່ອຍນັກຮຽນຄົນອື່ນໆ ຫລື ຂໍໂທດຕໍ່ການຕ້ອງຕຳຄົນອື່ນໆເພື່ອເຮັດໃຫ້ທຸກຄົນໃນໂຮງຮຽນມີຄວາມສງົບ.

2. ກໍ່ສ້າງວິທີທາງໃຫ້ຄວາມສະດວກແກ່ພໍ່ແມ່ນັກຮຽນເພື່ອເຂົ້າຮ່ວມພົວພັນໃນຊີວິດການສຶກສາຂອງເດັກເຂົາເຈົ້າ. ໃຫ້ບັນຊີລາຍຊື່ສິ່ງທີ່ສາມາດເຂົ້າອາສາສມັກ; ໃຫ້ພໍ່ແມ່ຈັດຕັ້ງການແລກປ່ຽນໂທຣະສັບກັນຂຶ້ນ; ຈັດໃຫ້ມີລາຍການອັນໃດອັນນຶ່ງໃນວັນທ້າຍສັບປະດາ ຫລື ໃນຕອນແລງວັນທັມດາກໍ່ໄດ້. ຈັດໃຫ້ມີບ່ອນດູແລເດັກໃຫ້ພໍ່ແມ່.

3. ຈັດຕັ້ງນະໂຍບາຍ "ບໍ່ໂຍະຍານ" ກ່ຽວເຣື້ອງອາວຸດ ແລະ ຄວາມຮຸນແຮງ. ຕິດປະກາດໂທດຂອງການທຳຜິດໄວ້ກ່ອນ. ອົບຮົມນັກຮຽນ, ພໍ່ແມ່ນັກຮຽນ, ແລະ ພະນັກງານກ່ຽວກັບນະໂຍບາຍ ແລະ ໂທດຂອງການລະເມີດກົດລະບຽບ. ຮວມທັງວິທີໃຫ້ນັກຮຽນລາຍງານການກະທຳຜິດກົດໝາຍໂດຍລັບໆ ທີ່ບໍ່ເປີດເຜີຍເພື່ອບໍ່ໃຫ້ເກີດມີການແກ້ແຄ້ນກັນ.

4. ເຮັດວຽກກັບກຸ່ມມວນຊົນ ແລະ ເຈົ້າໜ້າທີ່ຮັກສາກົດໝາຍ ເພື່ອເຮັດໃຫ້ທາງຍ່າງຜ່ານໄປມາຫາຫ້ອງຮຽນມີຄວາມປອດພັຍດີ; ເຖິງວ່ານັກຮຽນຜູ້ໃຫຍ່ຈະໄດ້ຢູ່ບ້ານ ກໍ່ຍັງດີກວ່າມີເຣື່ອງດ່າວ່າຂົ່ມເຫັງກັນ ຫລື ຂົ່ມຂູ່ຄວາມຮຸນແຮງຕໍ່ກັນ. ຊ່ອຍຄວາມພຍາຍາມເພື່ອບອກ ແລະ ລະງັບຈຸດທີ່ມີບັນຫາໃນເຂດຄຸ້ມນັ້ນ.

5. ຈັດຕັ້ງຄະນະກັມການ –ນັກຮຽນ–ພະນັກງານ ເພື່ອກໍ່ສ້າງແຜນຄວາມປອດພັຍໃນໂຮງຮຽນຂຶ້ນ, ເຊື້ອເຊີນເອົາເຈົ້າໜ້າທີ່ຮັກສາກົດໝາຍເຂົ້າມາຮ່ວມຄະນະ. ນະໂຍບາຍ ແລະ ລະບຽບການນັ້ນຕ້ອງດຳເນີນງານໄປທັງສອງຢ່າງ ເປັນ–ວັນໆໄປ ແລະ ຕ້ອງຕັດສິນເປັນເລື້ອງໆໄປຕາມການແຈ້ງບອກຂອງບຸກຄົນຢູ່ພາຍໃນຕຶກນັ້ນ, ຫລີກເວັ້ນບໍ່ໃຫ້ມີອຸບັຕິເຫດ, ເຫດການຕ່າງໆຢູ່ໃນທາງຍ່າງຈາກຕຶກນຶ່ງໄປຫາຕຶກນຶ່ງ ແລະ ຢູ່ເດີ່ນຫລິ້ນຂອງໂຮງຮຽນ, ລາຍງານກ່ຽວກັບເລື້ອງອາວຸດຫລື ສິ່ງທີ່ເປັນຫ່ວງຕ່າງໆນັ້ນ, ເຮັດວຽກເປັນຄູ່ຮ່ວມງານກັບເຈົ້າໜ້າທີ່ຕຳຣວດ, ແລະ ຕິດຕາມເບິ່ງວ່າພວກນັກຮຽນທີ່ມີບັນຫານັ້ນໄດ້ຮັບການຊ່ວຍເຫລືອ.

6. ຈຳນຳໃຫ້ພະນັກງານປະຕິບັດຕໍ່ກັນ ແລະ ຕໍ່ນັກຮຽນໃນວິທີທີ່ເຮັດໃຫ້ເຂົາເຈົ້າພໍໃຈ – ດ້ວຍຄວາມນັບຖື, ສຸພາບ, ແລະ ພິນິດພິຈາຣະນາ. ຕ້ອງເປັນເຈົ້າການບຸກຄົນຕົວຢ່າງ.

7. ກໍ່ສ້າງ ແລະ ຍຶດຖືການຕິດຕໍ່ກັບອົງການຮັກສາສຸຂພາບ, ສຸຂພາບຈິດ, ການອົບຮົມແນະນຳ, ແລະ ອົງການປະຊາສົງເຄາະໃນເຂດທ້ອງຖິ່ນນັ້ນ. ຮັບປະກັນໃຫ້ພວກນາຍຄູ, ຄູແນະນຳ, ຜູ້ນຳພາຄູ, ແລະ ຜູ້ຄົນອື່ນໆໃນໂຮງຮຽນ ຮູ້ຈັກວິທີສ້າງຄວາມຕິດຕໍ່ພົວພັນກັບການຊ່ວຍເຫລືອຕ່າງໆທີ່ພວກນັກຕ້ອງການ.

## ຂໍ້ສລູບ

- ❖ ໃຫ້ຣາງວັນຜູ້ມີການປະພຶດດີ
- ❖ ກໍ່ສ້າງວິທີທາງຕ່າງໆເພື່ອໃຫ້ພໍ່ແມ່ເຂົ້າພົວພັນ
- ❖ ຈັດຕັ້ງ ນະໂຍບາຍມາຕາການບໍ່ໂຍະຍານຂຶ້ນ
- ❖ ຊ່ອຍແຈ້ງ ແລະ ສະສາງຈຸດທີ່ມີບັນຫາໃນຄຸ້ມ
- ❖ ກໍ່ສ້າງແຜນການປອດພັຍຂອງໂຮງຮຽນຂຶ້ນ
- ❖ ປະຕິບັດຕໍ່ທຸກໆຄົນດ້ວຍຄວາມເຄົາຣົບ, ສຸພາບ, ແລະ ດ້ວຍຄວາມພິນິດພິຈາຣະນາ
- ❖ ຮັກສາອົງການຊ່ວຍເຫລືອສັງຄົມ ດ້ານການຮັກສາສຸຂພາບ, ສຸຂພາບຈິດ, ການແນະນຳອົບຮົມ ແລະ ດ້ານປະຊາສົງເຄາະ
- ❖ ພົບກັບອົງການຮັກສາລະບຽບກົດໝາຍ ແລະ ອົງຊ່ວຍເຫລືອເດັກນ້ອຍປະຈຳ ເພື່ອທົບທວນບັນຫາ ແລະ ສິ່ງທີ່ຫ່ວງໄຍຕ່າງໆ.
- ❖ ຝຶກແອບນັກຮຽນກ່ຽວກັບວິທີປ້ອງກັນຄວາມຮ້າຍແຮງ
- ❖ ເປີດອົບຮົມຄວາມຮູ້ໃຫ້ພະນັກງານ ແລະ ນາຍຄູ ດ້ານການຄວບຄຸມຄວາມໃຈຮ້າຍ, ການຫລຸດຜ່ອນຄວາມຕຶງຄຽດ, ໄກ່ເກັ່ຍແກ້ໄຂບັນຫາ ແລະ ການປ້ອງກັນຄວາມຮ້າຍແຮງ
- ❖ ຕ້ອນຮັບພວກນັກຮຽນໃໝ່ ແລະ ເຮັດໃຫ້ເຂົາເຈົ້າມີຄວາມຮູ້ສຶກສະບາຍໃຈ
- ❖ ເຂົ້າຮ່ວມທຸກໆກຸ່ມຂອງໂຮງຮຽນ ເພື່ອລະງັບຄວາມຮຸນແຮງ
- ❖ ພິຈາຣະນານຳເອົານະໂຍບາຍຕ່າງໆມາໃຊ້ ເພື່ອລະງັບການຖືອາວຸດມາໂຮງຮຽນ.

8. ເຮັດວຽກຮ່ວມກັບເຈົ້າໜ້າທີ່ສານຂອງເດັກນ້ອຍ ແລະ ເຈົ້າໜ້າທີ່ຮັກສາກົດໝາຍ ເພື່ອຮູ້ວິທີເຮັດວຽກກັບສິ່ງເຮັດໃຫ້ຢ້ານກົວກ່ຽວກັບຄວາມຮ້າຍແຮງ, ກັບສະພາບທີ່ອາດເກີດຄວາມຮ້າຍແຮງ, ແລະ ກັບການກະທຳຜິດກົດໝາຍອື່ນໆ. ພົບກັບເຂົາເຈົ້າເປັນປະຈຳ ເພື່ອທົບທວນເບິ່ງບັນຫາ ແລະ ສິ່ງທີ່ຫ່ວງໄຍຕ່າງໆ. ຈັດໃຫ້ມີລະບົບຈົດໝາຍສັ້ນໆເພື່ອຄວາມເຂົ້າໃຈກັນ ກັບເຈົ້າໜ້າທີ່ຮັກສາກົດໝາຍ ກ່ຽວກັບໜົນທາງເຂົ້າອອກຂອງຕຶກໂຮງຮຽນ, ການລາຍງານພຶດຕິການຜິດກົດໝາຍ, ການຈັບກຸມຄົນ, ແລະ ສິ່ງສຳຄັນອື່ນໆ.

–ມີຕໍ່–

9. ຮັບປະກັນໃຫ້ພວກນັກຮຽນໄດ້ຮຽນວິທີການປ້ອງກັນຄວາມຮ້າຍແຮງໃນທຸກໆການຮຽນຢູ່ໃນໂຮງຮຽນ. ຢ່າທຳຄັ້ງດຽວ ແລ້ວ ໃຊ້ໄປຕລອດ. ມີການຝຶກອົບຮົມໃນຂະແໜງວິຊາຕ່າງໆ. ນຳພາປະຕິບັດຈາກແຜນການຈັດໄວ້, ຈາກຫລັກສູດທີ່ທົດສອບແລ້ວໃນທຸກໆຄັ້ງ.

10. ເປີດອົບຮົມຄວາມຮູ້ໃຫ້ພະນັກງານ ແລະ ນາຍຄຣູກ່ຽວກັບການຄວບຄຸມຈິດໃຈ, ຫລຸດຜ່ອນຄວາມຄຶງຄຽດ, ໄກ່ເກັ່ຍແກ້ໄຂບັນຫາ ແລະ ຄວາມຮູ້ການປ້ອງກັນຄວາມຮ້າຍແຮງ. ຊ່ອຍເຂົາເຈົ້າຫາວິທີທາງ ຖ່າຍທອດຄວາມຮູ້ເຫລົ່ານີ້ໃຫ້ແກ່ພວກນັກຮຽນ. ແນ່ໃຈວ່າພວກນັກຮຽນໄດ້ຮັບການສຶກສອນອົບຮົມ.

11. ເຂົ້າຮ່ວມທຸກໆກຸ່ມຢູ່ພາຍໃນໂຮງຮຽນ – ຄະນະຄຣູອາຈານ, ພະນັກງານນັກວິຊາການ, ພະນັກງານຮັກສາຄວາມສະອາດໂຮງຮຽນ, ພວກນັກຮຽນ, ແລະ ພວກອື່ນໆ – ເພື່ອປະກອບການຈັດຕັ້ງວົນການແກ້ໄຂຄວາມຮຸນແຮງ. ເປີດການຕິດຕໍ່ກັບທຸກການຈັດຕັ້ງ ແລະ ກຸ່ມ ຄະນະຂອງນັກຮຽນ.

12. ພິຈາຣະນານຳເອົານະໂຍບາຍຕ່າງໆມາໃຊ້ ເພື່ອບໍ່ໃຫ້ມີການຖືກອາວຸດມາໂຮງຮຽນ.

*ບົດຄວາມອັນນີ້ໃຫ້ມາ ແລະ ພິມໂດຍຮັບອະນຸຍາດຈາກສະພາປ້ອງກັນພັຍຂອງຊາດ ©.*
*ລາຍລະອຽດເພີ້ມກ່ຽວກັບ ສະພາປ້ອງກັນພັຍຂອງຊາດນີ້ ຂໍໃຫ້ອ່ານທີ່* (www.ncpc.org).
*ລາຍລະອຽດເພີ້ມກ່ຽວກັບ ເຈົ້າໜ້າທີ່ຕຳຣວດບໍຣິການເມືອງແຊນດີເອໂກ, ຂໍໃຫ້ອ່ານທີ່ (http:prod031.sandi.net/policeservices/).*
*ອະພິນັນທະນາການຄ່າພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: Police Services Department: (619) 725-7000 Administration (619) 291-7678

**www.sandi.net**